# ສິດທິຂອງພໍ່ແມ່: ຄູ່ມືໂຄງການ Early Start ສຳລັບຄອບຄົວ (ປັບປຸງແກ້ໄຂປີ 2026)

ເອກະສານສະບັບນີ້ອ້າງອີງເຖິງກົດໝາຍ ແລະ ຂໍ້ບັງຄັບຕ່າງໆ ແຕ່ຂໍ້ອ້າງອີງບາງສ່ວນອາດຈະບໍ່ກົງກັບສະຖານະການຂອງທ່ານ.

- CFR ໝາຍເຖິງ Code of Federal Regulations (ປະມວນກົດໝາຍຂອງລັດຖະບານກາງ).
- GC ໝາຍເຖິງ Government Code (ປະມວນກົດໝາຍຂອງລັດຄາລິຟໍເນຍທີ່ປົກຄອງໂຄງການ Early Start)
- CCR ໝາຍເຖິງ California Code of Regulations (ປະມວນກົດໝາຍຂໍ້ບັງຄັບຂອງລັດຄາລິຟໍເນຍ)

ຖ້າທ່ານມີຄຳຖາມກ່ຽວກັບສິດທິຂອງທ່ານໃນຖານະພໍ່ແມ່ໃນໂຄງການ Early Start ກະລຸນາຕິດຕໍ່ສູນເຣຈິນັລ ຫຼື ອົງການການສຶກສາທ້ອງຖິ່ນ (LEA) ຂອງທ່ານ.

## ການໃຫ້ຄວາມຍິນຍອມໂດຍໄດ້ຮັບຂໍ້ມູນທີ່ຄົບຖ້ວນ

ທ່ານຕ້ອງໃຫ້ຄວາມຍິນຍອມເປັນລາຍລັກອັກສອນ ກ່ອນທີ່ລູກຂອງທ່ານຈະເຂົ້າຮັບການທົດສອບ ຫຼື ຮັບບໍລິການໃດໆຈາກໂຄງການ Early Start. ໂຄງການຈະຕ້ອງໄດ້ຮັບອະນຸຍາດຈາກທ່ານກ່ອນ ຈຶ່ງຈະສາມາດແບ່ງປັນຂໍ້ມູນກ່ຽວກັບທ່ານ ຫຼື ລູກຂອງທ່ານໄດ້. ເຊິ່ງເອີ້ນວ່າການໃຫ້ຄວາມຍິນຍອມໂດຍໄດ້ຮັບຂໍ້ມູນທີ່ຄົບຖ້ວນ. [34 CFR 303.7, 34 CFR 303.420]

- ທ່ານມີສິດທີ່ຈະໄດ້ຮັບຂໍ້ມູນທັງໝົດເປັນພາສາທີ່ທ່ານໃຊ້ຢູ່ເຮືອນ. [34 CFR 303.7]
- ທ່ານຕ້ອງໃຫ້ຄວາມຍິນຍອມເປັນລາຍລັກອັກສອນສຳລັບ:
  - ການທົດສອບ ຫຼື ການປະເມີນຜົນໃດໆ. [34 CFR 303.420(a), 17 CCR 52162(a)]
  - ການເລີ່ມຕົ້ນໃຫ້ບໍລິການໃດໆຂອງໂຄງການ Early Start. [34 CFR 303.420(a), 17 CCR 52162(a)]
  - ການເປີດເຜີຍຂໍ້ມູນສ່ວນຕົວຂອງລູກທ່ານໃຫ້ຄົນອື່ນຊາບ. [34 CFR 303.414, 17 CCR 52162(B), 17 CCR 52169]
  - ການໃຊ້ສິດປະກັນສຸຂະພາບຂອງທ່ານ ຖ້າອາດຈະເຮັດໃຫ້ທ່ານເສຍຄ່າໃຊ້ຈ່າຍເພີ່ມຂຶ້ນ ຫຼື ຫຼຸດສິດປະໂຫຍດຂອງທ່ານລົງ. [17 CCR 52162(d)]
- ທ່ານສາມາດເພີກຖອນການອະນຸຍາດໃຫ້ຢຸດໃຫ້ບໍລິການ ຫຼື ການທົດສອບໄດ້ທຸກເວລາ ໂດຍແຈ້ງເປັນລາຍລັກອັກສອນ. [34 CFR 303.7(c), 34 CFR 303.420(b), 17 CCR 52162(c)]

## ການຮັກສາຄວາມລັບ ແລະການເຂົ້າເຖິງບັນທຶກ

ຂໍ້ມູນທັງໝົດທີ່ທ່ານໃຫ້ໄວ້ກ່ຽວກັບລູກຂອງທ່ານ ແລະ ຄອບຄົວ ເປັນຂໍ້ມູນສ່ວນບຸກຄົນ ແລະ ໄດ້ຮັບການປົກປ້ອງ. ມີພຽງຜູ້ທີ່ຊ່ວຍເຫຼືອລູກຂອງທ່ານໂດຍກົງເທົ່ານັ້ນທີ່ຈະເຫັນຂໍ້ມູນນີ້ໄດ້. [34 CFR 303.29, 17 CCR 52160(a)]

- ທ່ານມີສິດທີ່ຈະເບິ່ງ ແລະ ໄດ້ຮັບສຳເນົາບັນທຶກຂອງລູກທ່ານ. [34 CFR 303.405]
- ທ່ານສາມາດຂໍຮັບສຳເນົາ ຫຼື ຄຳອະທິບາຍກ່ຽວກັບບັນທຶກຂອງທ່ານພາຍໃນຫ້າວັນເຮັດວຽກຫຼັງຈາກທີ່ທ່ານຮ້ອງຂໍ. [17 CCR 52164(b)]
- ທ່ານສາມາດຂໍໃຫ້ໂຄງການແກ້ໄຂ ຫຼື ລຶບຂໍ້ມູນທີ່ບໍ່ຖືກຕ້ອງໃນບັນທຶກຂອງລູກທ່ານອອກໄດ້. [17 CCR 52168]
- ຖ້າໂຄງການບໍ່ສາມາດແກ້ໄຂບັນທຶກໄດ້ ທ່ານສາມາດຂໍເຂົ້າພົບຜູ້ອຳນວຍການເພື່ອປຶກສາຫາລືກ່ຽວກັບເລື່ອງນີ້ໄດ້. [17 CCR 52168(c)]
- ໂຄງການດັ່ງກ່າວຕ້ອງອະທິບາຍໃຫ້ທ່ານຊາບວ່າເຂົາເຈົ້າເກັບຮັກສາຂໍ້ມູນຂອງຄອບຄົວຂອງທ່ານໃຫ້ປອດໄພ ແລະ ເປັນສ່ວນຕົວໄດ້ແນວໃດ. [34 CFR 303.404, 34 CFR 303.420, 17 CCR 52162, 17 CCR 52165, 17 CCR 52169]

## ການປະເມີນຜົນ ແລະ ການວັດຜົນ

ການທົດສອບ (ເອີ້ນວ່າການປະເມີນຜົນ ຫຼື ການວັດຜົນ) ຈະດໍາເນີນການໂດຍທີມງານຜູ້ຊ່ຽວຊານເພື່ອເບິ່ງວ່າລູກຂອງທ່ານມີຄຸນສົມບັດເໝາະສົມໃນການໄດ້ຮັບບໍລິການ Early Start ຫຼື ບໍ່. [GC 95014, 17 CCR 52022]

- ທ່ານຕ້ອງໄດ້ຮັບແຈ້ງກ່ຽວກັບສິດທີທັງໝົດຂອງທ່ານ. [34 CFR 303.421, GC 95020(c), 17 CCR 52161]
- ທ່ານຕ້ອງໃຫ້ຄວາມຍິນຍອມເປັນລາຍລັກອັກສອນກ່ອນຈະເລີ່ມການທົດສອບໃດໆ. [34 CFR 303.420, 17 CCR 52162]
- ທ່ານມີສິດທີ່ຈະເຂົ້າຮ່ວມໃນຂະບວນການທົດສອບ ແລະ ການປຶກສາຫາລືກ່ຽວກັບເກນການມີສິດໄດ້ຮັບຄວາມຊ່ວຍເຫຼືອ. [34 CFR 303.7, 34 CFR 303.321, 34 CFR 303.420, GC 95020, 17 CCR 52040(d), 17 CCR 52082, 17 CCR 52084]
- ການດໍາເນີນການປະເມີນຜົນໃຫ້ສໍາເລັດພາຍໃນ 45 ວັນນັບຈາກວັນທີ່ແນະນໍາສົ່ງຕໍ່ບໍລິການໄປຍັງໂຄງການ Early Start. [34 CFR 303.310, 17 CCR 52086(a)]
- ທ່ານມີສິດທີ່ຈະໄດ້ຮັບສໍາເນົາຜົນການທົດສອບເປັນລາຍລັກອັກສອນ. [34 CFR 303.310, 17 CCR 52086(a)]
- ການທົດສອບຈະຕ້ອງດໍາເນີນການດັ່ງຕໍ່ໄປນີ້:
  1. ດໍາເນີນການໂດຍໃຊ້ພາສາທີ່ໃຊ້ຢູ່ເຮືອນ ຖ້າເປັນໄປໄດ້. [34 CFR 303.321(a)(6), 17 CCR 52084(d)(4)]
  2. ມີຄວາມຍຸດຕິທໍາ ແລະ ບໍ່ປະຕິບັດຕໍ່ໃຜແຕກຕ່າງກັນເນື່ອງຈາກເຊື້ອຊາດ ຫຼື ວັດທະນະທໍາຂອງເຂົາເຈົ້າ. [34 CFR 303.321(a)(4), 17 CCR 52082(g)]
  3. ດໍາເນີນການໂດຍຜູ້ຊ່ຽວຊານທີ່ມີຄຸນວຸດທິ. [34 CFR 303.321, 17 CCR 52082, 17 CCR 52084]
  4. ມີການຕັດສິນໃຈແບບເປັນທີມ. ຄຸນສົມບັດໃນການເຂົ້າຮ່ວມໂຄງການບໍ່ໄດ້ພິຈາລະນາຈາກຜົນການທົດສອບພຽງຢ່າງດຽວ. [34 CFR 303.321, 17 CCR 52082]
  5. ຄົບຖ້ວນສົມບູນ. ທີມງານຈະທົດສອບພັດທະນາໃນທຸກດ້ານ (ການຄິດ, ການເຄື່ອນໄຫວ, ການເວົ້າ, ຄວາມເຂົ້າໃຈ, ທັກສະການຊ່ວຍເຫຼືອຕົນເອງ ແລະ ທັກສະດ້ານສັງຄົມ-ອາລົມ). [GC 95014, 17 CCR 52022]
- ການກວດຄວນເຮັດຢູ່ໃນສະຖານທີ່ທີ່ແອນ້ອຍ ແລະ ເດັກນ້ອຍໃຊ້ເວລາຢູ່ຕາມປົກກະຕິ ແລະ ສະດວກສະບາຍ ເຊັ່ນ: ເຮືອນ, ສວນສາທາລະນະ, ສູນລ້ຽງເດັກ ແລະອື່ນໆ. [17 CCR 52082(j), 17 CCR 52084(e)]
- ທ່ານສາມາດເລືອກເຂົ້າຮ່ວມການສໍາພາດກ່ຽວກັບຊັບພະຍາກອນ, ຄວາມຈໍາເປັນ ແລະ ຂໍ້ກັງວົນຂອງຄອບຄົວຂອງທ່ານໄດ້. [34 CFR 303.321, 17 CCR 52084, 17 CCR 52106]

## ແຜນບໍລິການຄອບຄົວສະເພາະບຸກຄົນ (IFSP)

ຖ້າລູກຂອງທ່ານມີສິດໄດ້ຮັບຄວາມຊ່ວຍເຫຼືອຈາກໂຄງການ Early Start ທີມງານຈະຈັດທຳແຜນບໍລິການຄອບຄົວສະເພາະບຸກຄົນ (IFSP) ໃຫ້. ນີ້ແມ່ນແຜນງານທີ່ເປັນລາຍລັກອັກສອນ ເຊິ່ງລະບຸລາຍລະອຽດກ່ຽວກັບຂໍ້ກັງວົນ, ເປົ້າໝາຍ ແລະ ບໍລິການສຳລັບລູກ ແລະ ຄອບຄົວຂອງທ່ານ. [17 CCR 52100]

- ການປະຊຸມ IFSP ຄັ້ງທຳອິດຈະຕ້ອງເກີດຂຶ້ນພາຍໃນ 45 ວັນນັບຈາກວັນທີ່ລູກຂອງທ່ານໄດ້ຮັບການແນະນຳສົ່ງຕໍ່ບໍລິການ. [34 CFR 303.20, 34 CFR 303.342, GC 95020(b), 17 CCR 52102]
- ແຜນບໍລິການ IFSP ຕ້ອງໄດ້ຮັບການທົບທວນຄືນທຸກ 6 ເດືອນ ແລະ ໄດ້ຮັບການປັບປຸງແກ້ໄຂຢ່າງໜ້ອຍປີລະຄັ້ງ. [34 CFR 303.342, 17 CCR 52102]

ການປະຊຸມ IFSP ສຳລັບພໍ່ແມ່:

- ທ່ານມີສິດທີ່ຈະນັດໃຫ້ມີການປະຊຸມໃນເວລາ ແລະ ສະຖານທີ່ທີ່ສະດວກສຳລັບທ່ານ ໂດຍໃຊ້ພາສາທີ່ທ່ານໃຊ້ຢູ່ເຮືອນ. [34 CFR 303.342, 17 CCR 52102]
- ທ່ານຕ້ອງໄດ້ຮັບໜັງສືແຈ້ງການເປັນລາຍລັກອັກສອນ *ກ່ອນ* ການປະຊຸມ. [34 CFR 303.342, 17 CCR 52102]
- ທ່ານສາມາດເຊີນບຸກຄົນໃດກໍໄດ້ທີ່ທ່ານຕ້ອງການໃຫ້ເຂົ້າຮ່ວມການປະຊຸມ ລວມທັງສະມາຊິກໃນຄອບຄົວ ຫຼື ຜູ້ສະໜັບສະໜູນ. [34 CFR 303.343, 17 CCR 52104]

ສຳລັບເອກະສານ IFSP, ໃນຖານະທີ່ເປັນພໍ່ແມ່:

- ທ່ານຈະໄດ້ຮັບສຳເນົາເອກະສານ IFSP ໂດຍບໍ່ເສຍຄ່າເປັນພາສາທີ່ທ່ານໃຊ້ຢູ່ເຮືອນ. [34 CFR 303.25, 34 CFR 303.409, 17 CCR 52102]
- ທ່ານຕ້ອງໃຫ້ຄວາມຍິນຍອມເປັນລາຍລັກອັກສອນສຳລັບບໍລິການແຕ່ລະລາຍການໃນແຜນບໍລິການ. ທ່ານສາມາດຕອບຕົກລົງສຳລັບບໍລິການຢ່າງ ແລະ ປະຕິເສດບໍລິການອື່ນໆໄດ້. ການປະຕິເສດບໍລິການໜຶ່ງຢ້າງບໍ່ໄດ້ໝາຍຄວາມວ່າລູກຂອງທ່ານຈະບໍ່ໄດ້ຮັບບໍລິການອື່ນໆ. [34 CFR 303.342, 34 CFR 303.420, 17 CCR 52102]
- ຄວນໃຫ້ບໍລິການໃນ "ສະພາບແວດລ້ອມຕາມທຳມະຊາດ" ຂອງລູກທ່ານ (ເຊັ່ນ: ບ້ານ ຫຼື ສູນລ້ຽງເດັກ). ຖ້າບໍ່ເປັນດັ່ງນັ້ນ ໂຄງການຈະຕ້ອງອະທິບາຍເຫດຜົນເປັນລາຍລັກອັກສອນ. [34 CFR 303.13, 34 CFR 303.344, 17 CCR 52106]
- ໂຄງການຈະຕ້ອງສົ່ງໜັງສືແຈ້ງການໃຫ້ທ່ານຊາບເປັນລາຍລັກອັກສອນ *ກ່ອນ* ທີ່ຈະສະເໜີ ຫຼື ປະຕິເສດການປ່ຽນແປງສິດ, ການສອບເສັງ ຫຼື ບໍລິການສຳລັບລູກຂອງທ່ານ. ໜັງສືແຈ້ງການສະບັບນີ້ຕ້ອງອະທິບາຍສິ່ງທີ່ເຂົາເຈົ້າຕ້ອງການດຳເນີນການ, ເປັນຫຍັງເຂົາເຈົ້າຈຶ່ງຕ້ອງການດຳເນີນການ ແລະ ທ່ານສາມາດຄັດຄ້ານໄດ້ແນວໃດ. [34 CFR 303.421, 17 CCR 52161]

**ການປະຊຸມໄກ່ເກ່ຍ, ການໄຕ່ສວນຄະດີຕາມຂະບວນການທີ່ຖືກຕ້ອງຕາມກົດໝາຍ ແລະ ການຮ້ອງຮຽນຕໍ່ລັດ**
ຖ້າທ່ານບໍ່ເຫັນດີນຳກ່ຽວກັບສິດ, ການສອບເສັງ ຫຼື ບໍລິການທີ່ລູກຂອງທ່ານໄດ້ຮັບ ທ່ານມີສິດທີ່ຈະໄດ້ຮັບການໄກ່ເກ່ຍ, ການໄຕ່ສວນຄະດີຕາມຂະບວນການທີ່ຖືກຕ້ອງຕາມກົດໝາຍ ແລະ ການຮ້ອງຮຽນຕໍ່ລັດ. ໂຄງການ Early Start ຕ້ອງແຈ້ງໃຫ້ທ່ານຊາບກ່ຽວກັບຕົວເລືອກເຫຼົ່ານີ້. [34 CFR 303.432, 17 CCR 52170]

## ການໄກ່ເກ່ຍ

ການໄກ່ເກ່ຍເປັນການປະຊຸມໂດຍສະໝັກໃຈ, ບໍ່ເປັນທາງການ ແລະ ເປັນຄວາມລັບ ໂດຍມີບຸກຄົນທີ່ເປັນກາງ (ຜູ້ໄກ່ເກ່ຍ) ເພື່ອຊ່ວຍທ່ານ ແລະ ໂຄງການ Early Start ໃນການບັນລຸຂໍ້ຕົກລົງຮ່ວມກັນ. ທ່ານສາມາດຂໍໄກ່ເກ່ຍເປັນທາງເລືອກທຳອິດໃນການແກ້ໄຂຂໍ້ຂັດແຍ່ງ ຫຼື ຂໍໄກ່ເກ່ຍໄດ້ທຸກເວລາໃນລະຫວ່າງການໄຕ່ສວນຄະດີຕາມຂະບວນການທີ່ຖືກຕ້ອງຕາມກົດໝາຍ ຫຼື ຂະບວນການຮ້ອງຮຽນ. [34 CFR 303.431, 17 CCR 52173]

- ທ່ານສາມາດຂໍໄກ່ເກ່ຍໄດ້ໃນເວລາ ແລະ ສະຖານທີ່ທີ່ສະດວກສຳລັບທ່ານ. [34 CFR 303.431, 17 CCR 52172]
- ທ່ານສາມາດປະຕິເສດການໄກ່ເກ່ຍໄດ້ ຖ້າທ່ານບໍ່ຕ້ອງການເຂົ້າຮ່ວມ. [34 CFR 303.431, 17 CCR 52173]
- ການສົນທະນາແມ່ນເປັນສ່ວນຕົວ ແລະ ບໍ່ສາມາດນຳໃຊ້ໃນການໄຕ່ສວນຄະດີໃນອະນາຄົດໄດ້. [34 CFR 303.431, 17 CCR 52173(j)]
- ທ່ານສາມາດພາບຸກຄົນອື່ນ ຫຼື ຜູ້ສະໜັບສະໜູນເຂົ້າຮ່ວມການປະຊຸມກັບທ່ານໄດ້. [17 CCR 52173(h)]
- ຖ້າທັງສອງຝ່າຍຕົກລົງກັນໄດ້ ຈະຕ້ອງບັນທຶກໄວ້ເປັນລາຍລັກອັກສອນ. [34 CFR 303.431, 17 CCR 52173(i)]

## ການໄຕ່ສວນຄະດີຕາມຂະບວນການທີ່ຖືກຕ້ອງຕາມກົດໝາຍ

ເປັນການໄຕ່ສວນຄະດີຢ່າງເປັນທາງການຕາມກົດໝາຍເພື່ອແກ້ໄຂຂໍ້ຂັດແຍ່ງ. [34 CFR 303.430, 17 CCR 52172]

- ທ່ານສາມາດຮ້ອງຂໍການພິຈາລະນາຄະດີໄດ້ ຖ້າທ່ານບໍ່ເຫັນດີນຳກ່ຽວກັບສິດ ຫຼື ບໍລິການທີ່ລູກຂອງທ່ານໄດ້ຮັບ. [17 CCR 52172(a)]
- ໃນຂະນະທີ່ການໄຕ່ສວນຄະດີກຳລັງດຳເນີນຢູ່ ລູກຂອງທ່ານຈະຍັງສືບຕໍ່ໄດ້ຮັບບໍລິການຕາມແຜນ IFSP (ເວັ້ນເສຍແຕ່ວ່າທ່ານ ແລະ ໂຄງການຈະຕົກລົງເຫັນດີກັບການປ່ຽນແປງ ຫຼື ລູກຂອງທ່ານຈະອອກຈາກໂຄງການເມື່ອອາຍຸ 3 ປີ). [34 CFR 303.209, 17 CCR 52172(g)]
- ຈະຕ້ອງມີການຕັດສິນໃຈຂັ້ນສຸດທ້າຍພາຍໃນ 30 ວັນນັບຈາກວັນທີທ່ານຍື່ນຄຳຮ້ອງຂໍ. [34 CFR 303.437(b), 17 CCR 52172(e)]

## ການຮ້ອງຮຽນຕໍ່ລັດ

ທ່ານສາມາດຍື່ນຄຳຮ້ອງຮຽນເປັນທາງການເປັນລາຍລັກອັກສອນຕໍ່ພະແນກບໍລິການດ້ານພັດທະນາການລັດຄາລິຟໍເນຍ (DDS) ຖ້າທ່ານເຊື່ອວ່າໂຄງການດັ່ງກ່າວໄດ້ລະເມີດກົດໝາຍຂອງລັດ ຫຼື ກົດໝາຍຂອງລັດຖະບານກາງ ລວມເຖິງການແກ້ໄຂບັນຫາຕ່າງໆ ເຊັ່ນ: ການຖືກປະຕິເສດສິດ ຫຼື ບໍລິການຕ່າງໆ. [17 CCR 52170]

- ຄຳຮ້ອງທຸກຕ້ອງເປັນລາຍລັກອັກສອນ ແລະ ລົງລາຍເຊັນ. ຕ້ອງອະທິບາຍບັນຫາຢ່າງລະອຽດ. [34 CFR 303.434, 17 CCR 52170]
- ຄຳຮ້ອງຮຽນຂອງທ່ານຕ້ອງລະບຸຂໍ້ມູນການຕິດຕໍ່ຂອງທ່ານ [17 CCR 52170(g)]; ຊື່ ແລະ ທີ່ຢູ່ຂອງເດັກນ້ອຍ [34 CFR 303.434]; ຊື່ຂອງສູນເຣຈິນັລ, LEA ຫຼື ຜູ້ໃຫ້ບໍລິການ [17 CCR 52170(g)]; ແລະທ່ານຄິດວ່າຄວນແກ້ໄຂບັນຫາວິທີໃດ. [34 CFR 303.434].
- ທ່ານຕ້ອງສົ່ງສຳເນົາໄປຫາອົງການທີ່ທ່ານກຳລັງຮ້ອງຮຽນ. [34 CFR 303.434, 17 CCR 52170(g)]
- DDS ຈະຕ້ອງສືບສວນ ແລະ ແຈ້ງຜົນການຕັດສິນໃຈເປັນລາຍລັກອັກສອນໃຫ້ທ່ານຊາບພາຍໃນ 60 ວັນ. [34 CFR 303.433, 17 CCR 52171(a)]
- ຖ້າ DDS ພົບວ່າອົງການດັ່ງກ່າວເຮັດຜິດພາດ ກໍຈະສັ່ງໃຫ້ດຳເນີນການແກ້ໄຂ. ເຊິ່ງອາດລວມເຖິງການໃຫ້ອົງການນັ້ນໃຫ້ບໍລິການ ຫຼື

ຈ່າຍຄືນເງິນຄ່າບໍລິການທີ່ທ່ານຈ່າຍໄປໃຫ້ແກ່ທ່ານ.
[17 CCR 52171]

ໃນຖານະທີ່ເປັນພໍ່ແມ່ ໃນລະຫວ່າງຂະບວນການຮ້ອງຮຽນ:

- ທ່ານສາມາດຂໍຄວາມຊ່ວຍເຫຼືອໃນການຂຽນຄຳຮ້ອງຮຽນໄດ້ຈາກຜູ້ປະສານງານບໍລິການຂອງທ່ານ ຫຼື ຈາກກຸ່ມສະໜັບສະໜູນ (ເຊັ່ນ: ສະພາແຫ່ງລັດວ່າດ້ວຍຄວາມພິການດ້ານພັດທະນາການ ຫຼື ອົງການເພື່ອສິດທິຂອງຄົນພິການແຫ່ງລັດຄາລິຟໍເນຍ) [17 CCR 52170]
- ຂໍ້ມູນຂອງລູກທ່ານຈະຖືກເກັບຮັກສາໄວ້ເປັນຄວາມລັບ. [17 CCR 52169]
- ທ່ານສາມາດສົ່ງຂໍ້ມູນເພີ່ມເຕີມໃຫ້ DDS ໃນລະຫວ່າງການສືບສວນໄດ້. [34 CFR 303.433, 17 CCR 52171(a)]
- ທ່ານຕ້ອງໄດ້ຮັບຄຳຕັດສິນເປັນລາຍລັກອັກສອນຂັ້ນສຸດທ້າຍພາຍໃນ 60 ວັນຫຼັງຈາກທາງ DDS ໄດ້ຮັບຄຳຮ້ອງຮຽນຂອງທ່ານ. [34 CFR 303.433, 17 CCR 52171(a)]
- ນອກຈາກນີ້ ທ່ານຍັງມີສິດທີ່ຈະຍື່ນຄຳຮ້ອງຮຽນຖ້າອົງການໃດໜຶ່ງບໍ່ປະຕິບັດຕາມຄຳຕັດສິນຂັ້ນສຸດທ້າຍຈາກການໄຕ່ສວນຄະດີຕາມຂະບວນການທີ່ຖືກຕ້ອງຕາມກົດໝາຍ. [34 CFR 303.433, 17 CCR 52171(e)]

ສົ່ງຄຳຮ້ອງຂໍການໄກ່ເກ່ຍ ຫຼື ການໄຕ່ສວນຄະດີຕາມຂະບວນການທີ່ຖືກຕ້ອງຕາມກົດໝາຍຂອງທ່ານໄປທີ່:

Office of Administrative Hearings
Attention: Early Start Intervention Section
2349 Gateway Oaks Drive, Suite 200
Sacramento, CA 95833-4231
ໂທລະສັບ: (916) 263-0654
ແຟັກ: (916) 376-6318

ສົ່ງຄຳຮ້ອງຮຽນທີ່ລົງນາມແລ້ວຂອງທ່ານໄປທີ່:

Department of Developmental Services
Attention: Community Appeals and Resolutions Branch
1215 O Street, MS 8-20
Sacramento, CA 95814
ໂທລະສັບ: (833) 538-3723
ແຟັກ: (916) 654-3641
ອີເມວ: appeals@dds.ca.gov

ຂໍ້ມູນໂດຍລະອຽດກ່ຽວກັບ ສິດທິຂອງພໍ່ແມ່ ແລະ ຂໍ້ບັງຄັບທີ່ກ່ຽວຂ້ອງ ສາມາດເບິ່ງໄດ້ທີ່ນີ້:

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບໂຄງການ Early Start ກະລຸນາຕິດຕໍ່ສາຍດ່ວນ Early Start Baby ທີ່ເບີ 800–515–BABY (800-515-2229) ຫຼື earlystart@dds.ca.gov.